ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 02 ຫາ 06 ທັນວາ 2024




ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ລົງຊຸກຍູ້ການຜະລິດທີ່ແຂວງ ຫົວພັນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້




# ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ລົງຊຸກຍູ້ ການຜະລິດທີ່ ແຂວງ ຫົວພັນ

ພາບ-ຂ່າວໂດຍ: ພະແນກໂຄສະນາ ແລະ ຂ່າວສານ

ໃນວັນທີ 27 ພະຈິກ 2024 ທ່ານ ປອ ລີນຄຳ ດວງສະຫວັນ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ໄດ້ເຂົ້າຢ້ຽມຢາມພົບປະ ທ່ານ ຄຳແພງ ໄຊສົມແພງ ກຳມະການສູນກາງພັກເລຂາພັກແຂວງ- ເຈົ້າແຂວງໆຫົວພັນ ເພື່ອລາຍງານຈຸດປະສົງການລົງເຄື່ອນໄຫວວຽກງານ ຢູ່ແຂວງຫົວພັນ ໃນລະຫວ່າງວັນທີ 27-29 ພະຈິກ 2024 ນີ້. ການພົບປະຄັ້ງນີ້ ທ່ານລັດຖະມົນຕີ ຍັງໄດ້ລາຍ ກ່ຽວກັບ ແຜນການເຄື່ອນໄຫວວຽກງານ ໂດຍສະເພາະ ແມ່ນ ການຈັດກອງປະຊຸມ ຄະນະກຳມະການແຫ່ງຊາດ ເພື່ອສົ່ງເສີມກາເຟລາວ, ການເຂົ້າຮ່ວມ ພິທີເປີດການນຳໃຊ້ ຖ້ຳກະສິກຳ ຢູ່ເມືອງວຽງໄຊ ແລະ ການຊຸກຍູ້ ສົ່ງເສີມວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຢູ່ແຂວງຫົວພັນ. ໃນນີ້, ທ່ານ ລັດຖະມົນຕີ ໄດ້ເນັ້ນໃສ່ ການຜະລິດກະສິກຳ ແລະ ປ່າໄມ້ຂອງແຂວງ ໂດຍສະເພາະ ການຜະລິດເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ແລະ ການຜະລິດເປັນສິນຄ້າ ແລະ ສິນຄ້າກະສິກຳທີ່ມີເອກະລັກຂອງ ແຂວງ ໂດຍສະເພາະ ເຂົ້າໄກ່ນ້ອຍ ແລະ ພືດບຸລິມະສິດ ເປັນສິນຄ້າ ທີ່ທາງແຂວງໄດ້ກຳນົດ (ກາເຟ, ຂີງ ແລະ ມັນຕົ້ນ) ແລະ ສັດ (ງົວ, ຄວາຍ ແລະ ໝູ); ການປົກປັກຮັກສາປ່າໄມ້ ໂດຍສະເພາະ ແມ່ນການຮ່ວມມືດ້ານສິນເຊື່ອກາກບອນ ແລະ ການພັດທະນາຊົນນະບົດ. ນອກນີ້, ຍັງເນັ້ນໃສ່ ການປະສານກັບພາກສ່ວນກ່ຽວຂ້ອງ ໃນການຊຸກຍູ້ຂະບວນການຜະລິດຂອງແຂວງ ຕິດພັນກັບ ການຟື້ນຟູພາຍຫຼັງເກີດໄພພິບັດ ໂດຍສະເພາະ ນ້ຳຖ້ວມ, ພະຍາດພືດ-ສັດລະບາດຕ່າງໆ, ໃນນີ້ ທ່ານ ລັດຖະມົນຕີ ຍັງໄດ້ມອບ ເງິນຊ່ວຍເຫຼືອເພື່ອຟື້ນຟູຫຼັງເກີດໄພພິບັດ ຈຳນວນ 100 ລ້ານກີບ. ທ່ານ ເຈົ້າແຂວງແຂວງຫົວພັນ ໄດ້ສະແດງຄວາມຍິນດີ ທີ່ຄະນະຂອງທ່ານລັດຖະມົນຕີ ໄດ້ມາ




ຈັດຕັ້ງປະຕິບັດວຽກງານ ຢູ່ແຂວງຫົວພັນ ແລະ ໄດ້ສະເໜີໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ມີການຊຸກຍູ້ສົ່ງເສີມ ການຜະລິດກະສິກຳ, ປົກປັກຮັກສາປ່າໄມ້ ແລະ ວຽກງານພັດທະນາຊົນນະບົດ ຢູ່ແຂວງຢ່າງເປັນປົກກະຕິ ເພື່ອຊ່ວຍພັດທະນາແຂວງ ໃຫ້ດີຂຶ້ນເປັນກ້າວໆ.

ຈາກນັ້ນ, ໃນເວລາຕໍ່ມາ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ພ້ອມດ້ວຍຄະນະ ຍັງໄດ້ໂອ້ລົມ ຕໍ່ ຄະນະນຳ ແລະ ພະນັກງານຫຼັກແຫຼ່ງຂອງ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງຫົວພັນ. ໃນການໂອ້ລົມຄັ້ງນີ້, ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຫົວພັນ ໄດ້ລາຍງານສະພາບລວມການຈັດຕັ້ງປະຕິບັດວຽກງານ ໃນໄລຍະຜ່ານມາ ໂດຍໄດ້ຍົກໃຫ້ເຫັນຜົນສຳເລັດ ດ້ານດີ ດ້ານອ່ອນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ແຜນວຽກໃນຕໍ່ໜ້າ ຂອງວຽກງານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດຢູ່ແຂວງຫົວພັນ. ໃນຕອນທ້າຍ ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ໃຫ້ທິດຊີ້ນຳ ໂດຍເນັ້ນໃສ່ສືບຕໍ່ການຈັດຕັ້ງປະຕິບັດ 4 ແຜນງານຂອງຂະແໜງການ, ອັນສຳຄັນແມ່ນການສົ່ງເສີມການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ການຜະລິດກະສິກຳສະອາດ ປອດສານພິດ ເປັນມິດຕໍ່ສິ່ງແວດລ້ອມ ແລະ ຜະລິດເປັນສິນຄ້າເພື່ອສົ່ງອອກ ຮັບປະກັນການຄ້ຳປະກັນສະບຽງອາຫານພາຍໃນຢ່າງໜັກແໜ້ນ ເນື່ອງຈາກກະສິກຳເປັນພື້ນຖານສຳຄັນຂອງປະເທດເຮົາ ແລະ ປະຊາຊົນສ່ວນໃຫຍ່ແມ່ນອີງໃສ່ການກະສິກຳ ເປັນອາຊີບຕົ້ນຕໍ ຕາມແນວທາງນະໂຍບາຍຂອງພັກ ໂດຍສະເພາະການຫັນປະເທດ ແລະ ລະບົບເສດຖະກິດຂອງພວກເຮົາ ຈາກລະບອບເສດຖະກິດທີ່ເຕັມໄປດ້ວຍຄວາມເພິ່ງພາ ແລະ ເອື່ອຍອີງ ໃຫ້ກ້າວໄປສູ່ລະບອບ ເສດຖະກິດເປັນເຈົ້າຕົນເອງ. ໃນໂອກາດການລົງເຄື່ອນໄຫວຄັ້ງນີ້ ທ່ານຍັງໄດ້ມອບຄອມພິວເຕີ 2 ເຄື່ອງ ມູນຄ່າ 3,000ໂດລາສະຫະລັດ ແລະ ແນວພັນເຂົ້າ ຈຳນວນ 5 ໂຕນ ມູນຄ່າ 85 ລ້ານກີບ ໃຫ້ແກ່ພະແນກ ກະສິກຳ ແລະ ປ່າໄມ້ ແຂວງຫົວພັນ ເພື່ອນຳໄປຊຸກຍູ້ຊ່ວຍເຫຼືອ ປະຊາຊົນກໍ່ຄືຊາວກະສິກອນ ທີ່ໄດ້ຮັບຜົນກະທົບຈາກໄພພິບັດຕ່າງໆ ອີກດ້ວຍ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;